**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 07 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 16 ມີນາ 2023

# ບົດບັນທຶກກອງປະຊຸມ

# ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2023

ກອງປະຊຸມຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ I ປະຈຳປີ 2023 ໄດ້ຈັດຂຶ້ນໃນຕອນບ່າຍ ເວລາ 13:30 ໂມງ ຂອງວັນອັງຄານ ວັນທີ 21 ກຸມພາ 2023, ທີ່ຫ້ອງປະຊຸມ ຊັ້ນ III, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໂດຍການເປັນປະທານຂອງ ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ, ປະທານ ຄຄຊ. ເຂົ້າຮ່ວມກອງປະຊຸມຄັ້ງນີ້ປະກອບມີ: ຄະນະ ຄຄຊ, ສຄຄຊ, ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ຕະຫຼາດຫຼັກຊັບລາວ (ຕລຊລ) ລວມທັງໝົດ 27 ທ່ານ (ລາຍຊື່ຜູ້ເຂົ້າຮ່ວມໄດ້ຄັດຕິດມາພ້ອມນີ້).

ກອງປະຊຸມ ໄດ້ຮັບຊາບຄວາມຄືບໜ້າ ແລະ ຍ້ອງຍໍ ກ່ຽວກັບຜົນສຳເລັດຫຼາຍດ້ານ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະຂອງ ຄຄຊ ຄັ້ງທີ II ປະຈຳປີ 2022 ແລະ ຜົນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ເຫັນດີຕໍ່ທິດທາງແຜນການ ໃນປີ 2023 ຂອງ ສຄຄຊ ແລະ ຕລຊລ. ເພື່ອສືບຕໍ່ຈັດຕັ້ງວຽກງານໃຫ້ມີຜົນສຳເລັດຍິ່ງຂຶ້ນ ຜ່ານການປຶກສາຫາລື ທີ່ປະຊຸມໄດ້ມອບໝາຍໃຫ້ ສຄຄຊ ແລະ ຕລຊລ ລວມທັງພາກສ່ວນກ່ຽວຂ້ອງສືບຕໍ່ປະຕິບັດວຽກງານທີ່ຍັງຄົງຄ້າງໃຫ້ສຳເລັດ ດັ່ງນີ້:

❖ **ສຄຄຊ**

1. ມອບໃຫ້ ສຄຄຊ ສົມທົບກັບ ຕລຊລ ຄົ້ນຄວ້າປະເມີນຮອບດ້ານວຽກງານພັດທະນາຕະຫຼາດທຶນ ເພື່ອຊຸກຍູ້ ແລະ ຈູງໃຈ ໃຫ້ບໍລິສັດມາລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນ ຕລຊລ ເປັນຕົ້ນ ຄົ້ນຄວ້ານະໂຍບາຍປີ່ນອ້ອມຮອບດ້ານ ນອກເໜືອຈາກນະໂຍບາຍດ້ານອາກອນ. ພ້ອມນີ້, ໃຫ້ເພີ່ມທະວີໃນການຄັດເລືອກບໍລິສັດເຂົ້າຈົດທະບຽນໃນ ຕລຊລ ໃຫ້ເນັ້ນຄຸນນະພາບເປັນຫຼັກ ເພື່ອສ້າງຄວາມໜ້າເຊື່ອຖື ແລະ ພາບພົດທີ່ດີໃຫ້ຕະຫຼາດທຶນລາວ;
2. ມອບໃຫ້ ສຄຄຊ, ຕລຊລ ແລກປ່ຽນບົດຮຽນວຽກງານການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນ ຂອງຕ່າງປະເທດ ນອກຈາກບົດຮຽນຂອງ ສສ.ຫວຽດນາມ, ຈີນ ແລະ ໄທ;
3. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າສ້າງເງື່ອນໄຂເອື້ອອຳນວຍໃຫ້ເກີດມີຜະລິດຕະພັນໃໝ່ ເປັນຕົ້ນ ກອງທຶນຮ່ວມລົງທຶນ (Venture Capital: VC) ແລະ ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ພ້ອມທັງ ຄົ້ນຄວ້າສ້າງນິຕິກຳຮອງຮັບການສ້າງຕັ້ງ ແລະ ການຄຸ້ມຄອງຜະລິດຕະພັນດັ່ງກ່າວ ໂດຍອີງໃສ່ບົດຮຽນຈາກຕ່າງປະເທດ ເປັນຕົ້ນ: ສສ. ຫວຽດນາມ, ຈີນ, ໄທ ແລະ ອື່ນໆ. ພ້ອມທັງ,

ໃຫ້ຄົ້ນຄວ້າກ່ຽວກັບກອງທຶນປະເພດອື່ນ ເຊັ່ນ: ກອງທຶນຮ່ວມ (Mutual Fund) ແລະ ກອງທຶນ Angel Fund;

4. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າການສະເໜີເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO). ພ້ອມນີ້, ໃຫ້ຄົ້ນຄວ້າສັງລວມລາຍຈ່າຍ ຕິດພັນຄ່າທໍານຽມການເຂົ້າເປັນສະມາຊິກຂອງອົງການດັ່ງກ່າວ ແລະ ສົມທົບກັບ ທຫລ ຮ່າງໜັງສືສະເໜີຫາກະຊວງການຕ່າງປະເທດ ເພື່ອພິຈາລະນາ ເອົາເຂົ້າແຜນລາຍຈ່າຍລວມຕິດພັນວຽກງານຮ່ວມມືສາກົນ ຂອງ ສປປ ລາວ;
5. ມອບໃຫ້ ສຄຄຊ ຄົ້ນຄວ້າປັບປຸງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 60/ນຍ ລົງວັນທີ 15 ມິຖຸນາ 2021 ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ ໂດຍມອບສິດໃຫ້ ທ່ານ ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈໍາການ ຊີ້ນໍາລວມ ແລະ ຮັບຜິດຊອບວຽກງານຮອບດ້ານຂອງ ຄຄຊ ຕາມສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຄຊ ພ້ອມທັງ ມີສິດລົງລາຍເຊັນກ່ຽວກັບເອກະສານທາງການ ຂອງ ຄຄຊ;
6. ມອບໃຫ້ ສຄຄຊ ສົມທົບກັບ ຕລຊລ ແລະ ບໍລິສັດຫຼັກຊັບ ຄົ້ນຄວ້າການໂຄສະນາເຜີຍແຜ່ວຽກງານຫຼັກຊັບໃຫ້ຜ່ານຫຼາຍຮູບແບບ ແລະ ຊ່ອງທາງ ເປັນຕົ້ນ ຜ່ານກອງປະກວດຕ່າງໆ ຫຼື ຜ່ານບຸກຄົນທີ່ໄດ້ຮັບຄວາມນິຍົມຂອງສັງຄົມ ແລະ ອື່ນໆ ເພື່ອໃຫ້ສາມາດເຂົ້າເຖິງຜູ້ລົງທຶນ ແລະ ສັງຄົມຫຼາຍຂຶ້ນ;
7. ມອບໃຫ້ ສຄຄຊ ເອົາໃຈໃສ່ຕິດຕາມກວດກາບັນດາໜ້າວຽກທີ່ຍັງຄົງຄ້າງ ຕິດພັນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະ ຂອງ ຄະນະ ຄຄຊ ຄັ້ງທີ II ປະຈໍາປີ 2022 ແລະ ຄັ້ງທີ I ປະຈໍາປີ 2023 ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດໃຫ້ສໍາເລັດຕາມຄາດໝາຍ.

❖ **ຕະຫຼາດຫຼັກຊັບລາວ:**

1. ມອບໃຫ້ ຕລຊລ ປະສານສົມທົບກັບ ທຫລ, ສຄຄຊ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ ກະຊວງຍຸຕິທໍາ ຄົ້ນຄວ້າກ່ຽວກັບບັນຫາການຖືຮຸ້ນຂອງ ທຫລ ໃນ ຕລຊລ;
2. ມອບໃຫ້ ຕລຊລ ປະສານສົມທົບກັບ ທຫລ ແລະ ສຄຄຊ ເອົາໃຈໃສ່ຊຸກຍູ້ໃຫ້ສາມາດເປີດກອງປະຊຸມຂາຮຸ້ນ ລະຫວ່າງ ທຫລ ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ເພື່ອປຶກສາຫາລືແຜນທຸລະກິດປະຈໍາປີ ຂອງ ຕລຊລ ແລະ ແຜນພັດທະນາລະບົບໄອທີໃໝ່ ຂອງ ຕລຊລ ຖ້າມີການກໍານົດຄວາມຮັບຜິດຊອບໃນ JVA ແນວໃດກໍຄົ້ນຄວ້າປະຕິບັດຕາມນັ້ນ;
3. ມອບໃຫ້ ຕລຊລ ສືບຕໍ່ຄົ້ນຄວ້າສ້າງເງື່ອນໄຂຕ່າງໆ ໂດຍສະເພາະແມ່ນ ລະບົບນິຕິກໍາ ແລະ ລະບົບໄອທີ ຂອງ ຕລຊລ ເພື່ອຮອງຮັບກະດານຮອງ.

❖ **ພາກສ່ວນກ່ຽວຂ້ອງ:**

1. ມອບໃຫ້ ທຫລ ສົມທົບພາກສ່ວນກ່ຽວຂ້ອງ ທີ່ກໍາລັງປະເມີນສະພາບເສດຖະກິດ ແລະ ການເຄື່ອນໄຫວຂອງລັດວິສາຫະກິດ ຢູ່ ສປປ ລາວ ຮ່ວມກັບທີ່ປຶກສາສາກົນ ເພື່ອເອົາວຽກປະເມີນຕະຫຼາດທຶນຕະຫຼາດຫຼັກຊັບຢູ່ ສປປ ລາວ ເຂົ້າໃນວາລະການເຮັດວຽກກັບຊ່ຽວຊານສາກົນດັ່ງກ່າວນັ້ນ;
2. ມອບໃຫ້ ກະຊວງການເງິນ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທໍາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ອົງການໄອຍະ

ການປະຊາຊົນສູງສຸດ ຄົ້ນຄວ້າສະເໜີ ທ່ານລັດຖະມົນຕີຂອງພາກສ່ວນຕົນ ເພື່ອພິຈາລະນາອອກຂໍ້ຕົກລົງແຕ່ງຕັ້ງ ກົມກ່ຽວຂ້ອງ ເພື່ອເປັນຈຸດໃຈກາງປະສານງານວຽກງານຕະຫຼາດທຶນ ແລະ ນຳສົ່ງໃຫ້ ສຄຄຊ ສັງລວມເປັນບ່ອນອີງ;

3. ມອບໃຫ້ ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜອງຂໍ້ມູນຂອງບໍລິສັດເປົ້າໝາຍຈົດທະບຽນໃນກະດານຫຼັກ ແລະ ກະດານຮອງ, ບໍລິສັດລົງທຶນໂດຍກົງຈາກຕ່າງປະເທດ (FDI) ແລະ ວິສາຫະກິດໃນເຂດເສດຖະກິດພິເສດ ໃຫ້ ສຄຄຊ. ພ້ອມທັງ, ຊ່ວຍຄົ້ນຄວ້າຄັດເລືອກ ແລະ ຊຸກຍູ້ສົ່ງເສີມການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນກະດານຫຼັກ ແລະ ກະດານຮອງ ຂອງ ວິສາຫະກິດດັ່ງກ່າວ;
4. ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບ ສຄຄຊ ແລະ ຕລຊລ ຄົ້ນຄວ້າ ແລະ ຊຸກຍູ້ການປັບປຸງ ຫຼື ຟື້ນຟູ ທຸລະກິດຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແລະ ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ຖ້າຈະສືບຕໍ່ເປັນບໍລິສັດຈົດທະບຽນໃນ ຕລຊລ;
5. ມອບໃຫ້ ກະຊວງການເງິນ ພິຈາລະນາສົ່ງເສີມດ້ານນະໂຍບາຍອາກອນ ໃຫ້ແກ່ບໍລິສັດຫຼັງເຂົ້າຈົດທະບຽນໃນ ຕລຊລ ແລະ ເພື່ອດຶງດູດວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ເຂົ້າຈົດທະບຽນໃນກະດານຮອງ;
6. ການຮ່ວມມືກັບ ຕະຫຼາດຫຼັກຊັບ ສ. ເກົາຫຼີ ເຫັນດີ ໃຫ້ນຳໃຊ້ກົນໄກການທູດຕື່ມ ຄຽງຄູ່ກັບການປະສານງານຕາມກົນໄກປົກກະຕິ. ມອບໃຫ້ ທ່ານ ນ. ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີ,ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກຳມະການ ຄຄຊ ແລະ ສຄຄຊ ຄົ້ນຄວ້າເຊີນ ທ່ານ ເອກອັກຄະລັດຖະທູດ ສ. ເກົາຫຼີ ປະຈຳ ສປປ ລາວ ເພື່ອປຶກສາຫາລືຊຸກຍູ້ ໃຫ້ໄດ້ເປີດກອງປະຊຸມຂາຮຸ້ນຂອງ ຕລຊລ ລະຫວ່າງ ທຫລ ແລະ ຕະຫຼາດຫຼັກຊັບ ສ. ເກົາຫຼີ. ພ້ອມນີ້, ໃຫ້ສຳເນົານຳສົ່ງເອກະສານການສະເໜີປຶກສາຫາລືໃຫ້ ສະຖານທູດລາວ ປະຈຳ ສ.ເກົາຫຼີ ເພື່ອຊາບ;
7. ມອບໃຫ້ ກະຊວງການເງິນ ຮີບຮ້ອນຄົ້ນຄວ້າສ້າງຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການອະນຸຍາດ ແລະ ຄຸ້ມຄອງບໍລິສັດປະເມີນມູນຄ່າຊັບສິນ ພ້ອມທັງ ປະສານກັບກະຊວງຍຸຕິທຳ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອກວດກາຄວາມສອດຄ່ອງທາງດ້ານກົດໝາຍ;
8. ມອບໃຫ້ ທ່ານ ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ ສືບຕໍ່ຊີ້ນຳຢ່າງໃກ້ຊິດ ແລະ ຕິດຕາມການເຄື່ອນໄຫວວຽກງານຫຼັກຊັບ ແລະ ລາຍງານ ທ່ານ ນາຍົກລັດຖະມົນຕີ, ປະທານ ຄຄຊ ເພື່ອຂໍທິດຊີ້ນຳໃນແຕ່ລະໄລຍະ;
9. ມອບໃຫ້ບັນດາກະຊວງທີ່ຢູ່ໃນ ຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາແກ້ໄຂບັນດາວຽກງານ ທີ່ຍັງຄົງຄ້າງຕິດພັນກັບວຽກງານຫຼັກຊັບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມຄືບໜ້າ ແລະ ຜົນສຳເລັດ.

ກອງປະຊຸມໄດ້ດຳເນີນມາເຖິງເວລາ 16:45 ໂມງ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
| --- | --- |
| ສອນໄຊ ສີພັນດອນ | ພອງຈິນດາ ແສງສຸລິວົງ |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2023

ເວລາ 13:30 ໂມງ, ວັນທີ 21 ກຸມພາ 2023 ທີ່ ຫ້ອງປະຊຸມ "ຫ້ອງພິມ ທາງຫຼັງຫ້ອງ 325" ຊັ້ນ III
ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| 1 | ທ່ານ ສອນໄຊ ສີພັນດອນ | ປະທານຄະນະກຳມະການ ຄຸ້ມຄອງຫຼັກຊັບ | ສຳນັກງານ ນາຍົກລັດຖະມົນຕີ | |
| 2 | ທ່ານ ບຸນເຫຼືອ ສິນໄຊວໍຣະວົງ | ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ | ທະນາຄານແຫ່ງ ສປປ ລາວ | |
| 3 | ທ່ານ ປອ. ພູທະນູເພັດ ໄຊສົມບັດ | ຮອງລັດຖະມົນຕີ, ຮອງປະທານ ຄຄຊ | ກະຊວງການເງິນ | |
| 4 | ທ່ານ ນ. ທິບພະກອນ ຈັນທະວົງສາ | ຮອງລັດຖະມົນຕີ, ຮອງຫົວໜ້າ, ກຳມະການ ຄຄຊ | ສຳນັກງານ ນາຍົກລັດຖະມົນຕີ | |
| 5 | ທ່ານ ພົນຕີ ຄຳກົ່ງ ພຸຍຫຼ້າມະນີວົງ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງປ້ອງກັນ ຄວາມສະຫງົບ | – |
| 6 | ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງຍຸຕິທຳ | |
| 7 | ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ຮອງຜູ້ວ່າການ, ກຳມະການ ຄຄຊ | ທະນາຄານແຫ່ງ ສປປ ລາວ | |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2023

ເວລາ 13:30 ໂມງ, ວັນທີ 21 ກຸມພາ 2023 ທີ່ ຫ້ອງປະຊຸມ "ຫ້ອງພິມ ທາງຫຼັງຫ້ອງ 325" ຊັ້ນ III
ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| 8 | ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງແຜນການ ແລະ ການລົງທຶນ | |
| 9 | ທ່ານ ປອ. ມະໂນທອງ ວົງໄຊ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງອຸດສາຫະກຳ ແລະ ການຄ້າ | |
| 10 | ທ່ານ ບຸນທັນ ບຸນທະວີໄລ | ຮອງຫົວໜ້າ, ກຳມະການ ຄຄຊ | ອົງການໄອຍະການ ປະຊາຊົນສູງສຸດ | |
| 11 | ທ່ານ ນ. ຟອງຈັນດາ ແສງສຸລິວົງ | ຫົວໜ້າ ສຳນັກງານ ຄຄຊ, ເລຂາ ຄຄຊ | ສຳນັກງານ ຄຄຊ | |

**ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2023**

**ເວລາ 13:30 ໂມງ, ວັນທີ 21 ກຸມພາ 2023 ທີ່ ຫ້ອງປະຊຸມ "ຫ້ອງພິມ ທາງຫຼັງຫ້ອງ 325" ຊັ້ນ III**
**ຫ້ອງວ່າການສໍານັກງານ ນາຍົກລັດຖະມົນຕີ**

| ລໍາດັບ | ຊື່ ແລະ ນາມສະກຸນ | ຕໍາແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| | **ຄະນະກົມ 4 ທ່ານ:** | | | |
| 12 | ທ່ານ ເພັດສະຖາພອນ ແກ້ວວົງວິຈິດ | ຫົວໜ້າຫ້ອງການ ທຫລ, ປະທານສະພາບໍລິຫານ ຕລຊລ | ທະນາຄານແຫ່ງ ສປປ ລາວ | |
| 13 | ທ່ານ ສຸພັກ ຖິ່ນໄຊພອນ | ຜູ້ອໍານວຍການໃຫຍ່ | ຕະຫຼາດຫຼັກຊັບລາວ | |
| 14 | ທ່ານ ສຽວສະຫວາດ ທີລະກຸນ | ຮອງຫົວໜ້າສໍານັກງານ ຄຄຊ | ສໍານັກງານ ຄຄຊ | |
| 15 | ທ່ານ ນ. ວຽງດາລີ ສຸພານຸວົງ | ຮອງຫົວໜ້າສໍານັກງານ ຄຄຊ | ສໍານັກງານ ຄຄຊ | |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2023

ເວລາ 13:30 ໂມງ, ວັນທີ 21 ກຸມພາ 2023 ທີ່ ຫ້ອງປະຊຸມ "ຫ້ອງພິມ ທາງຫຼັງຫ້ອງ 325" ຊັ້ນ III
ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| | | **ຄະນະພະແນກ 7 ທ່ານ:** | | |
| 16 | ທ່ານ ບຸນຈິງ ກອງຄຳ | ຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ | ສຳນັກງານ ຄຄຊ | |
| 17 | ທ່ານ ບົວລຳພູ ຄຳມະນີວົງ | ຫົວໜ້າພະແນກນິຕິກຳ | ສຳນັກງານ ຄຄຊ | |
| 18 | ທ່ານ ເອກະລາດ ສີສານ | ຫົວໜ້າພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ | ສຳນັກງານ ຄຄຊ | |
| 19 | ທ່ານ ວັນນະສັກ ກອງວົງສາ | ຫົວໜ້າພະແນກຫ້ອງການຄຸ້ມຄອງ ແລະ ບໍລິຫານ | ຕະຫຼາດຫຼັກຊັບລາວ | — |
| 20 | ທ່ານ ວິລະເດດ ທອງວັນຄຳ | ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ | ສຳນັກງານ ຄຄຊ | |
| 21 | ທ່ານ ນ. ອາລຸນນາ ສີວົງທອງ | ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| 22 | ທ່ານ ທະນູສິດ ແສງມະນີພອນ | ຮອງຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ | ສຳນັກງານ ຄຄຊ | |
| | | **ເລຂາການນຳ 2 ທ່ານ:** | | |
| 23 | ທ່ານ ປອ. ໂຄສະດາ ວົງຊະນະ | ຮອງຫົວໜ້າກົມ, ຜູ້ຊ່ວຍເລຂາປະທານ ຄຄຊ | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | |
| 24 | ທ່ານ ຕຽເອ ສີນວນຈັນ | ເລຂາຮອງປະທານ ຄຄຊ ຜູ້ປະຈຳການ | ທະນາຄານແຫ່ງ ສປປ ລາວ | |

**ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2023**

**ເວລາ 13:30 ໂມງ, ວັນທີ 21 ກຸມພາ 2023 ທີ່ ຫ້ອງປະຊຸມ "ຫ້ອງພິມ ທາງຫຼັງຫ້ອງ 325" ຊັ້ນ III**
**ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ**

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| | **ຜູ້ຊ່ວຍວຽກກອງປະຊຸມ 2 ທ່ານ:** | | | |
| 25 | ທ່ານ ນາງ ບົວພິມ ອິງຮັກນຸດ | ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| 26 | ທ່ານ ສຸລິວັນ ຈັນທະວົງ | ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| | **ຜູ້ບັນທຶກກອງປະຊຸມ 1 ທ່ານ:** | | | |
| 27 | ທ່ານ ນາງ ສີອຳພອນ ບຸດອາສາ | ວິຊາການພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |

| | | | | |
|---|---|---|---|---|
| 1 | ນ. ສຸກອີວາ ແສນຊາຍ | [illegible] LS | LSX | |
| 2 | ທ. ບຸນມີ ກຸດພິລາ | [illegible] ພ/ບ | ກພທ | |
| 3 | | | | |
| 4 | | | | |
| 5 | | | | |